ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ — ເລກທີ 4000 /ກປ

ນະຄອນຫຼວງວຽງຈັນ, ວັນທີ 01 AUG 2024

# ແຈ້ງການ

ເຖິງ: - ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ;

- ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ.

ເລື່ອງ: ການປັບປຸງກົງຈັກການຈັດຕັ້ງວຽກງານກວດກາລັດ ຂອງຂະແໜງກະສິກຳ ແລະ ປ່າໄມ້ ຂັ້ນທ້ອງຖິ່ນ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳແນະນຳ ກ່ຽວກັບການປັບປຸງການຈັດຕັ້ງຄະນະກວດກາພັກ ແລະ ອົງການກວດກາລັດແຕ່ລະຂັ້ນ ສະບັບເລກທີ 379/ຄກສພ, ລົງວັນທີ 07 ພະຈິກ 2023;
- ອີງຕາມ ໜັງສືສະເໜີ ຂອງກົມກວດກາ ສະບັບເລກທີ 0349/ກກ, ລົງວັນທີ 23 ກໍລະກົດ 2024;
- ອີງຕາມ ໜັງສືແຈ້ງຕອບ ຂອງກະຊວງພາຍໃນ ສະບັບເລກທີ 144/ພນ, ລົງວັນທີ 31 ກໍລະກົດ 2024;
- ອີງຕາມ ການຕົກລົງເຫັນດີຂອງຄະນະປະຈຳພັກກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 01 ສິງຫາ 2024.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອຈັດຕັ້ງຜັນຂະຫຍາຍຄຳແນະນຳ ວ່າດ້ວຍການຈັດຕັ້ງຜັນຂະຫຍາຍຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 190/ຄລສພ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ສະບັບເລກທີ 01/ນຍ, ລົງວັນທີ 06 ທັນວາ 2021 ໃນໄລຍະຜ່ານມາ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກຄຳແນະນຳ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ຂອງຂະແໜງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0215/ກປ, ລົງວັນທີ 01 ກຸມພາ 2022 ຊຶ່ງມອບໃຫ້ຂະແໜງກະສິກຳ ແລະ ປ່າໄມ້ ຂັ້ນທ້ອງຖິ່ນ ສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກຳນົດໂຄງປະກອບກົງຈັກ ໂດຍອີງໃສ່ທ່າແຮງ, ຄວາມພ້ອມດ້ານຕ່າງໆຂອງຕົນ ບົນພື້ນຖານ 09 ຫົວໜ່ວຍຕົ້ນຕໍ ເປັນຕົ້ນແມ່ນໂຮມເອົາວຽກງານຊ່ວຍໜູນເຂົ້າເປັນຫົວໜ່ວຍດຽວກັນ. ຜ່ານການປະເມີນການຈັດຕັ້ງປະຕິບັດວຽກງານຕົວຈິງ ຂອງຂະແໜງກະສິກຳ ແລະ ປ່າໄມ້ ຂັ້ນທ້ອງຖິ່ນ ເຫັນວ່າ: ວຽກງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ແມ່ນພົບຄວາມຫຍຸ້ງຍາກໃນການປະຕິບັດຕາມ ສິດ ແລະ ໜ້າທີ່ຂອງຕົນ. ສະນັ້ນ, ເພື່ອເຮັດໃຫ້ຂັ້ນທ້ອງຖິ່ນ ສາມາດເຄື່ອນໄຫວວຽກງານກວດກາລັດ ຕາມພາລະບົດບາດຂອງຕົນ ໄດ້ຢ່າງຄົບຖ້ວນ, ມີຄວາມຄ່ອງຕົວ, ມີປະສິດທິພາບ ແລະ ປະສິດທິຜົນ ບົນພື້ນຖານສອດຄ່ອງກັບ ກົດໝາຍ ວ່າດ້ວຍກວດກາລັດ ສະບັບເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022 ແລະ ຄຳແນະນຳ ສະບັບເລກທີ 379/ຄກສພ, ລົງວັນທີ 07 ພະຈິກ 2023 ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງແຈ້ງມາຍັງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ໃຫ້ຄົ້ນຄວ້າກຳນົດໂຄງປະກອບການຈັດຕັ້ງຄືນໃໝ່ ດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ຄົ້ນຄວ້າບົນພື້ນຖານຈຸດພິເສດ, ທ່າແຮງ ແລະ ຄວາມພ້ອມດ້ານຕ່າງໆຂອງຕົນ ໃນການແຍກວຽກງານກວດກາລັດ ອອກຈາກວຽກງານບໍລິຫານ, ຈັດຕັ້ງ ແລະ ແຜນການ ມາເປັນຫົວໜ່ວຍເອກະລາດ ທີ່ມີ

ຖານະທຽບເທົ່າຂະແໜງການອື່ນ ທີ່ຂຶ້ນກັບພະແນກ ແລະ ໜ່ວຍງານອື່ນ ທີ່ຂຶ້ນກັບຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ; ໃນກໍລະນີ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ທີ່ໄດ້ສ້າງຕັ້ງໜ່ວຍງານກວດກາລັດຂຶ້ນແລ້ວ ແມ່ນໃຫ້ຮັກສາກົງຈັກໄວ້ຄືເກົ່າ;

2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ຮີບຮ້ອນປັບປຸງກົງຈັກການຈັດຕັ້ງຂອງຕົນ ໃຫ້ສຳເລັດກ່ອນເດືອນກັນຍາ 2024 ບົນພື້ນຖານສອດຄ່ອງກັບລະບຽບການທີ່ກຳນົດໄວ້ ໂດຍປະສານສົມທົບກັບຄະນະຮັບຜິດຊອບປັບປຸງກົງຈັກຂັ້ນ ແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ ພ້ອມທັງຄົ້ນຄວ້າຮ່າງຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ ໃຫ້ຄົບຖ້ວນ, ຮັດກຸມ ແລະ ບໍ່ຊໍ້າຊ້ອນກັນ; ພາຍຫຼັງສຳເລັດແລ້ວ ໃຫ້ນຳສະເໜີຂໍອະນຸມັດຈາກເຈົ້າແຂວງ, ເຈົ້າຄອງ, ເຈົ້າເມືອງ/ນະຄອນ;
3. ການສັບຊ້ອນ, ຈັດວາງ ພະນັກງານ-ລັດຖະກອນ ສະເໜີໃຫ້ ຄະນະພັກ-ຄະນະນຳ ແຕ່ລະຂັ້ນ ຂອງແຕ່ລະພາກສ່ວນ ຄົ້ນຄວ້າຕາມຄວາມເໝາະສົມ; ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານມາຍັງ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເຈົ້າແຂວງ, ເຈົ້າຄອງ, ເຈົ້າເມືອງ/ນະຄອນ ເພື່ອໃຫ້ທິດຊີ້ນຳ;
4. ມອບໃຫ້ ກົມຈັດຕັ້ງ ແລະ ພະນັກງານ, ກົມກວດກາ ປະສານສົມທົບ ຊຸກຍູ້, ຕິດຕາມ ການປັບປຸງກົງຈັກການຈັດຕັ້ງ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ໃຫ້ສຳເລັດໂດຍໄວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ

ບ່ອນນຳສົ່ງ

| | |
|---|---|
| 1. ທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ | 03 ສະບັບ; |
| 2. ຫ້ອງການ | 01 ສະບັບ; |
| 3. ກົມຈັດຕັ້ງ ແລະ ພະນັກງານ | 01 ສະບັບ; |
| 4. ກົມກວດກາ | 02 ສະບັບ; |
| 5. ບັນດາພະແນກ ກປ ແຂວງ/ນະຄອນຫຼວງວຽງຈັນ | 03 ສະບັບ; |
| 6. ເກັບຮັກສາໄວ້ | 02 ສະບັບ. |

ລົມຄຳ ດວງສະຫວັນ